ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14, ແຟັກ: 213495

ເລກທີ 1290 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 20 MAR 2024

# ໜັງສືແຈ້ງການ

**ຮຽນ**: ທ່ານຫົວໜ້າກອງກວດກາອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ-ນະຄອນຫຼວງ, ບໍລິສັດ, ຫ້າງຮ້ານ ແລະ ປະຊາຊົນໃນທົ່ວປະເທດ ທີ່ນັບຖື.

**ເລື່ອງ**: ການຂຶ້ນທະບຽນ ຜະລິດຕະພັນອາຫານເສີມ ຂອງບໍລິສັດທີຊີທີກຣຸບ ຈຳກັດ

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013.
- ອີງຕາມ ໜັງສືແຈ້ງການ ຂອງ ກົມອາຫານ ແລະ ຢາ, ສະບັບເລກທີ 9131/ກອຢ, ລົງວັນທີ 23 ພະຈິກ 2023.
- ອີງຕາມ ການຄົ້ນຄວ້າ ແລະ ເຫັນດີ ຂອງກົມອາຫານ ແລະ ຢາ.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜະລິດຕະພັນອາຫານເສີມ 3 ລາຍການ ຂອງບໍລິສັດທີຊີທີກຣຸບ ຈຳກັດ, ຜະລິດໂດຍ ບໍລິສັດ ຫຸ້ນສ່ວນ ເນເຈີເມດ ແອນ ເທຣດດິ້ງ (Nature Made Production and Trading Joint Stock Company) ທີ່ປະເທດ ສສ. ຫວຽດນາມ ເຊິ່ງທີ່ຜ່ານມາບໍ່ທັນໄດ້ຮັບອະນຸຍາດຂຶ້ນທະບຽນ ແຕ່ມີການຈໍລະຈອນຈຳໜ່າຍໃນສັງຄົມ ແລະ ມີການແຈ້ງເຕືອນ.

ຜ່ານການຕິດຕາມກວດກາ, ຊຸກຍູ້ ແລະ ແນະນຳຜູ້ປະກອບການ ໃນການແກ້ໄຂສະພາບການຈໍລະຈອນຈຳໜ່າຍດັ່ງກ່າວ, ມາຮອດປະຈຸບັນ ທາງບໍລິສັດຜູ້ນຳເຂົ້າໄດ້ຮັບການແນະນຳຈາກເຈົ້າໜ້າທີ່ອາຫານ ແລະ ຢາ ທີ່ກ່ຽວຂ້ອງແລ້ວ ແລະ ໄດ້ນຳເອົາຜະລິດຕະພັນດັ່ງກ່າວມາຂຶ້ນທະບຽນ ຕາມລະບຽບການກ່ຽວກັບການຄຸ້ມຄອງອາຫານນຳເຂົ້າ ນຳກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ແລ້ວ, ຊຶ່ງມີລາຍລະອຽດດັ່ງນີ້:

1. Ovisure Gold (Food Supplement) ເລກທະບຽນ FDD 2121703, ລົງວັນທີ 22 ມັງກອນ 2024,
2. Hevisure Gold (Food Supplement) ເລກທະບຽນ FDD 2121713, ລົງວັນທີ 22 ມັງກອນ 2024,
3. Emysure (Food Supplement) ເລກທະບຽນ FDD 2121693, ລົງວັນທີ 22 ມັງກອນ 2024.

ເພື່ອຄຸ້ມຄອງໃຫ້ສອດຄ່ອງຕາມລະບຽບການ ໃນໄລຍະຕໍ່ໄປສະເໜີໃຫ້ທາງ ກອງກວດກາອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ-ນະຄອນຫຼວງ (ຂະແໜງອາຫານ ແລະ ຢາ) ໃນຂອບເຂດທົ່ວປະເທດ ສືບຕໍ່ຕິດຕາມ-ຄຸ້ມຄອງໃນການນຳເຂົ້າ ແລະ ການຈໍລະຈອນຈຳໜ່າຍໃນສັງຄົມໃຫ້ຖອດຄ່ອງຕາມລະບຽບການ ບົນພື້ນຖານຮັບປະກັນທາງດ້ານຄຸນນະພາບ ແລະ ຄວາມປອດໄພທີ່ທາງການໄດ້ກຳນົດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ເປັນຂໍ້ມູນໃນການບໍລິໂພກຜະລິດຕະພັນ ທີ່ຈໍລະຈອນຈາໜ່າຍຢ່າງຖືກຕ້ອງຕາມລະບຽບການນີ້ດ້ວຍ.

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ຫົວໜ້າກົມ

ປອ. ດຣ. ບຸນຮູ ແກ້ວທາວົງ